**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ: 021 214013,
ແຟກ: 021 213495

ເລກທີ: 4076 /ກອຢ

ນະຄອນຫລວງວຽງຈັນ, ວັນທີ 27 MAY 2020

## ໜັງສືແຈ້ງການ

**ຮຽນ:** ທ່ານ ຫົວໜ້າພະແນກສາທາລະນະສຸກແຂວງ, ນະຄອນຫລວງ ທີ່ນັບຖື.

**ເລື່ອງ:** ການແນະນຳເພີ່ມເຕີມກ່ຽວກັບການລະບຸເນື້ອໃນສະຫລາກຜະລິດຕະພັນອາຫານ ແລະ ນ້ຳດື່ມ ທີ່ຂໍຂຶ້ນ ແລະ ຕໍ່ ທະບຽນ.

- ອີງຕາມ ກົດໝາຍວ່າດ້ວຍອາຫານ ສະບັບປັບປຸງ ເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013;

ເພື່ອເຮັດໃຫ້ເນື້ອໃນຂອງສະຫລາກຜະລິດຕະພັນອາຫານ ມີຄວາມສອດຄ່ອງຕາມຂໍ້ຕົກລົງ ວ່າດ້ວຍສະຫລາກຂອງຜະລິດຕະພັນອາຫານທີ່ບັນຈຸໃນເຄື່ອງຫຸ້ມຫໍ່ ສະບັບ ເລກທີ 519/ກຊສ, ລົງວັນທີ 18 ມີນາ 2009 ໂດຍສາຍເຫດກ່ຽວກັບການໃສ່ຊື່ຂອງຜະລິດຕະພັນທີ່ບໍ່ມີຄວາມເໝາະສົມ, ການກ່າວອ້າງຄຸນປະໂຫຍດຂອງນ້ຳດື່ມ, ການໂຄສະນາຜະລິດຕະພັນອາຫານ, ນ້ຳດື່ມ ເກີນຄວາມເປັນຈິງ ແລະ ການນຳໃຊ້ຄຳສັບທີ່ບໍ່ໄດ້ຮັບການພິສູດທາງດ້ານວິທະຍາສາດ ແລະ ຢັ້ງຢືນຢ່າງເປັນທາງການ ລົງໃສ່ສະຫລາກຜະລິດຕະພັນອາຫານ ແລະ ນ້ຳດື່ມ.

ກົມອາຫານ ແລະ ຢາ ຂໍແຈ້ງມາຍັງທ່ານ ກ່ຽວກັບການປັບປຸງ ແກ້ໄຂ ເນື້ອໃນຂອງສະຫລາກຜະລິດຕະພັນອາຫານ ແລະ ນ້ຳດື່ມ ມີດັ່ງນີ້:

1. ກວດກາຊື່ຂອງຜະລິດຕະພັນໃຫ້ມີຄວາມເໝາະສົມ, ສັ້ນກະທັດລັດ ແລະ ບໍ່ຍາວເກີນໄປ ຕົວຢ່າງ: ນ້ຳດື່ມກາໜ່ວຍໂລກ, ນ້ຳດື່ມກາປາໂລມາຄຳ, ນ້ຳດື່ມການົກສັນຕິພາບ ...
2. ບໍ່ໃຫ້ລະບຸຂໍ້ຄວາມທີ່ມີລັກສະນະເປັນການໂຄສະນາ ເຊັ່ນ: ນ້ຳດື່ມສຸຂະພາບ, ນ້ຳດື່ມຄຸນນະພາບ, ນ້ຳດື່ມເພື່ອສຸຂະພາບ ນ້ຳດື່ມກາແຮ່ທາດ, ກາສຸຂະພາບ, ມີຄວາມສົດ (Pure), ແລະ ຄຸນນະພາບຍອດຢ້ຽມ (Premium) ຖ້າມີກໍ່ຕ້ອງໄດ້ຮັບການຢັ້ງຢືນ;
3. ກວດກາເນື້ອໃນຂອງສະຫລາກນ້ຳດື່ມ ໃຫ້ຖືກຕ້ອງສອດຄ່ອງກັບຄວາມເປັນຈິງຂອງຂັ້ນຕອນການຜະລິດ ເຊັ່ນ: ຜ່ານການຕອງດ້ວຍລະບົບ ຊອບເທນເນີ, ອາໂອ ແລະ ຂ້າເຊື້ອດ້ວຍໂອໂຊນ, ແສງຢູວີ;
4. ສະຫລາກຕ້ອງເປັນພາສາລາວ ຖ້າມີພາສາສາກົນ ຫຼື ພາສາອັງກິດ ຂະໜາດຂອງພາສາລາວຕ້ອງໃຫຍ່ກວ່າ ແລະ ຢູ່ເທິງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອພິຈາລະນາຕາມທາງຄວນດ້ວຍ.

**ຫົວໜ້າກົມ**

**ດຣ.ສົມທະວີ ຈາງວິສົມມິດ**